ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ຈັດພິທີປາຖະກະຖາ ວັນແມ່ຍິງສາກົນ ຄົບຮອບ 111 ປີ




ໃນວັນທີ 12 ມີນາ 2021 ທີ່ຜ່ານມາ ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ສມຍ.ທຫລ) ໄດ້ຈັດຕັ້ງພິທີປາຖະກະຖາ ເນື່ອງໃນໂອກາດວັນແມ່ຍິງສາກົນ ຄົບຮອບ 111 ປີ (08 ມີນາ 1910 - 08 ມີນາ 2021) ຂຶ້ນທີ່ສະໂມສອນ ສະຖາບັນການທະນາຄານ ໂດຍການໃຫ້ກຽດເປັນປະທານຂອງສະຫາຍນາງ ຂັນແກ້ວ ຫຼ້າມະນີເງິາ ກຳມະການປະຈຳພັກ ທຫລ ຜູ້ຊີ້ນຳວຽກງານສາມອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍການເຂົ້າຮ່ວມຂອງສະມາຊິກແມ່ຍິງທີ່ມາຈາກບັນດາຮາກຖານສະຫະພັນແມ່ຍິງ ແລະ ຕາງໜ້າຈາກສາມອົງການຈັດຕັ້ງມະຫາຊົນ ທຫລ ເຂົ້າຮ່ວມ 500 ທ່ານ.

ໃນພິທີ, ສະຫາຍນາງ ຄຳເຜີຍ ວໍລະເດດ ຮອງປະທານສະຫະພັນແມ່ຍິງ ທຫລ ໄດ້ນຳສະເໜີປະຫວັດຄວາມເປັນມາຂອງວັນແມ່ຍິງສາກົນໂດຍສັງເຂບ ແລະ ໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງການຕໍ່ສູ້ຂອງແມ່ຍິງໃນທົ່ວໂລກເພື່ອຮຽກຮ້ອງເອົາສິດສະເໝີພາບລະຫວ່າງຍິງ-ຊາຍ. ພ້ອມດຽວກັນນີ້, ຜູ້ເຂົ້າຮ່ວມກໍ່ຍັງໄດ້ຮັບຟັງການບັນຍາຍໃນຫົວຂໍ້: “ສຸຂະພາບຂອງແມ່ຍິງ” ຈາກທ່ານ ປອ.ດຣ. ອາລີງກອນ ເພັງສະຫວັນ ຮອງປະທານສະມາຄົມການແພດດ້ານປະສູດພະຍາດຍິງ, ຄະນະບໍດີ ຄະນະແພດສາດ ມະຫາວິທະຍາໄລວິທະຍາສາດສຸຂະພາບ ຊຶ່ງທ່ານໄດ້ຍົກໃຫ້ເຫັນຫຼາຍບັນຫາກ່ຽວກັບສຸຂະພາບແມ່ຍິງ ບໍ່ວ່າຈະເປັນບັນຫາກ່ຽວກັບລະບົບສືບພັນ, ການຄຸມກຳເນີດ, ພະຍາດຍິງ, ການຖືພາ-ເກີດລູກ, ມະເຮັງໃນອາໄວຍະວະສືບພັນຂອງເພດຍິງ ແລະ ອື່ນໆ ຊຶ່ງລ້ວນແລ້ວແຕ່ເປັນຄວາມຮູ້ທີ່ມີຄຸນຄ່າ ແລະ ທັງເປັນບັນຫາທີ່ຕິດພັນກັບສຸຂະພາບຂອງແມ່ຍິງເຮົາ ເພື່ອໃຫ້ແມ່ຍິງໄດ້ຍົກສູງຄວາມເອົາໃຈໃສ່ຕໍ່ການເບິ່ງແຍງ ແລະ ຕິດຕາມອາການຜິດປົກກະຕິຕ່າງໆຂອງຮ່າງກາຍຕົນເອງໄດ້ດີຂຶ້ນກວ່າເກົ່າ.






ໃນຕອນທ້າຍຂອງພິທີ, ສະຫາຍນາງ ຂັນແກ້ວ ຫຼ້າມະນີເງິາ ກຳມະການປະຈຳພັກ ທຫລ ໄດ້ໃຫ້ກຽດມີຄຳເຫັນເນື່ອງໃນໂອກາດອັນສະຫງ່າລາສີນີ້ ໂດຍທ່ານໄດ້ຮຽກຮ້ອງມາຍັງສະມາຊິກເອື້ອຍນ້ອງແມ່ຍິງຈົ່ງໄດ້ເອົາໃຈໃສ່ຍົກລະດັບຄວາມຮູ້ຄວາມສາມາດຂອງຕົນເພື່ອນຳເອົາຄວາມຮູ້ຄວາມສາມາດທີ່ມີນັ້ນມາພັດທະນາ ແລະ ໝູນໃຊ້ໃນໜ້າທີ່ວຽກງານທີ່ຕົນເອງຮັບຜິດຊອບໃຫ້ດີຂຶ້ນ ພ້ອມທັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການຈັດຕັ້ງແມ່ຍິງ ທຫລ ໃຫ້ມີບົດບາດທີ່ສູງຂຶ້ນກວ່າເກົ່າ.

**# ຂ່າວ-ພາບ: ນ. ວັນປະເສີດ ສີມບູນຂັນ.**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ